13

# ສະຖານະພາບຂອງຄຳພີໃບລານ ໃນພາກຕະວັນອອກສຽງເໜືອປະເທດໄທ

**ຈາຣຸວັນ ທັມມະວັດ***

## ສະພາບທົ່ວໄປ

ເອກະສານບູຮານ ປະເພດຄຳພີໃບລານໃນພາກຕະເວັນອອກສຽງເໜືອ ປະກົດໃນຫລາຍຈັງຫວັດ ໄດ້ແກ່ ມະຫາສາລະຄາມ ຂອນແກ່ນ ກາລະສິນ ຮ້ອຍເອັດ ອຸບົນຣາຊທານີ ນະຄອນຣາຊສີມາ ໜອງຄາຍ ສຸຣິນ ສຣີກະເກດ ນະຄອນພະນົມ ໂດຍພົບໃນວັດທີ່ມີຫໍໄຕ ແລະ ເປັນສູນການສຶກສາບາລີ ຫລືປະຣຽນທັມ ລັກສະນະໃບລານມີທັງຂະໜາດສັ້ນທີ່ຮຽກວ່າ ໜັງສືກ້ອມ ແລະຂະໜາດຍາວ ທີ່ຮຽກວ່າ ໜັງສືຜູກ ຕົວອັກສອນທີ່ໃຊ້ຂຽນ ມີສາມແບບ ຄື: ອັກສອນຂອມ ອັກສອນທັມ ແລະ ອັກສອນໄທນ້ອຍ ເນື້ອຫາທີ່ຈາລຶກໄວ້ ຄື: ພຸດທະປະຫວັດ ພຸດທະທຳນວາຍ ປະຫວັດອັກຄະຣະສາວົກ ຊາດົກ ພຣະໄຕປິດົກ ພິທີກັມ ພຸດທະທັມ ນິທານພື້ນບ້ານ ກົດໝາຍບູຮານ ສະໝຸນໄພ ຄາຖາອາຄົມ

ຕົວຢ່າງຄຳພີໃບລານໄດ້ແກ່ ຄິຣິມານົນທະສູຕ ຄຸຣຸທັມ ຈັກກະວານ ຈັນທະຄາດ ລຳພຣະຍາອິນ ເຊຕຸພົນ ພຸດທະຕຳນານ ພຸດທະບາດ ເທວະທູຕສູຕ ພື້ນທາດພະນົມ ມູລນິພພານ ເນມີຣາດ ປະຖົມມູລລີ ປະຖົມສົມໂພດ ຕຳນານພຣະແກ້ວ ພຣະມາໄລ ມິລິນທະປັນຫາ ຈັນທະກຸມານ ເນມີຣາດ ມະຫາເວສສັນດອນຊາດົກ ມະໂຫສົດຊາດົກ ບາລີວິນິສັຍ ພຣະສູຕ ພຣະອະພິທັມ ມົງຄົນທີປະນີ ວິນັຍທັມມະບົທ ສູຕຂວັນ ສູຕກັມ ທິພະມົນ ສວດມົນ ກະຖິນ ຄອງວັດ ສະຫລອງ ອານິສົງ

ເນື້ອຫາຂອງຄັມພີ ສະແດງເຖິງພັນທະກິດໃນດ້ານການເຜີຍແຜ່ພຸດທະສາສະໜາ ການຈັດລະບຽບສັງຄົມ ການເປັນຄູ່ມືພິທີກັມ ການເປັນຄູ່ມືການເທດ ການໃຫ້ຄວາມບັນເທີງຜ່ານເລື່ອງສົມມຸດເລື່ອງເລົ່າ ຄັມພີໃບລານຈຶ່ງເປັນເອກະສານສຳຄັນຂອງພຣະສົງ ໝໍທັມ ໝໍສູຕ ຜູ້ບວດຣຽນ ໂຄງສ້າງໜ້າທີ່ຂອງຄັມພີ

---

* ຣອງສາສະດາຈານ ສັງກັດພາກວິຊາພາສາໄທ ແລະພາສາຕະວັນອອກ ມະຫາວິທະຍາລັຍມະຫາສາລະຄາມ ເມທີວິຈັຍອາວຸໂສ ຣຸ່ນ 2

ໃບລານ ຈຶ່ງເຊື່ອມໂຍງກັບການໃຫ້ການສຶກສາ ຕາມທັມນຽມທ້ອງຖິ່ນ ຜູ້ກຳກັບດູແລຄືສະຖາບັນສາສະໜາ ແລະ ສະຖາບັນການປົກຄອງທີ່ຮຽກວ່າ ພຸດທະຈັກ ແລະ ອານາຈັກ ຄັມພີໃບລານ ຈຶ່ງມີສະຖານະພາບເປັນເອກະສານສັກສິດ ທີ່ເປັນຫລັກບ້ານຫລັກເມືອງ

## ການອະນຸລັກຟື້ນຟູເອກະສານບູຮານ ໃນພາກຕະເວັນອອກສຽງເໜືອ

ການອະນຸລັກຄັມພີໃບລານ ໃນພາກຕະເວັນອອກສຽງເໜືອ ເປັນພັນທະກິດໂດຍກົງຂອງພຣະສົງ ແລະ ນັກປາດຜູ້ບວດຮຽນ ຫລືຜູ້ໃສ່ໃຈໃນການເລົ່າຮຽນ ເຊັ່ນ ພຣະອະຣິຍານຸວັດ ເຂມຈາຣີ ແຫ່ງຈັງຫວັດມະຫາສາລະຄາມ ນາຍປຣີຊາ ພິນທອງ ແຫ່ງຈັງຫວັດອຸບົນຣາຊທານີ ເຈົ້າອາວາດວັດ ທີ່ເປັນສຳນັກທັມສອນບາລີ ເປັນຕົ້ນ ຕໍ່ມາ ກົມສິລປະກອນ ສະຖາບັນການສຶກສາ ພິພິທະພັນທ້ອງຖິ່ນ ສະພາວັດທະນະທັມຈັງຫວັດຕ່າງໆ ໄດ້ໃຫ້ຄວາມສຳຄັນ ໂດຍຮວບຮວມ ຮັກສາ ສຶກສາຄັມພີໃບລານທີ່ເຫັນວ່າມີຄຸນຄ່າ ຕົວຢ່າງທີ່ເປັນຮູປະທັມໃນອະດີດ ຄືການດຳເນີນງານຂອງ ພຣະອະຣິຍານຸວັດ ເຂມຈາຣີ ລະຫວ່າງປີ ພ.ສ. 2497-2533 ໂດຍການຈັດຕັ້ງສູນອະນຸລັກວັນນະຄະດີພາກຕະເວັນອອກສຽງເໜືອ ກຳໜົດເປົ້າໝາຍ ດັ່ງນີ້ :

1. ເພື່ອຮວບຮວມວັນນະຄະດີທີ່ກະຈັດກະຈາຍ ໃຫ້ເປັນໝວດໝູ່
2. ເພື່ອຄົ້ນຄວ້າອັກສອນບູຮານ ແລະ ວັນນະຄະດີ
3. ເພື່ອຊຳລະກວດແກ້ ແລະ ຖອດຄວາມຮູ້ເປັນພາສາສມັຍນິຍົມ ປະຣິວັດເປັນຮູບເຫລັ້ມເຜີຍແຜ່
4. ເພື່ອອະນຸລັກວັນນະຄະດີ ສິລປະ ບູຮານຄະດີ
5. ເພື່ອສົ່ງເສີມສຶກສາປະຣິຍັດຕິທັມ ສິລທັມ ວັດທະນະທັມ ປະເພນີ

ຜົນການທຳງານຮວບຮວມຄັມພີໃບລານ ໄດ້ປະມານ 2.000 ສະບັບ ແລະ ກວດແກ້ຊຳຣະ ປະຣິວັດເປັນພາສາໄທເຜີຍແຜ່ ປະມານ 30 ເລື່ອງ ນອກຈາກນີ້ ສຳນັກພິມສອງແຫ່ງ ຄື ໂຮງພິມສິຣິທັນ ແລະໂຮງພິມຄັງນານາທັມ ໄດ້ໃຫ້ຄວາມສຳຄັນຕີພິມເລື່ອງລາວຈາກໃບລານ ສູ່ຮູບແບບໜັງສື ຈຳໜ່າຍແກ່ວົງການສຶກສາ ແລະວົງການບັນເທີງທ້ອງຖິ່ນຢ່າງຕໍ່ເນື່ອງ ແຕ່ການສຶກສາຈຳກັດຢູ່ໃນໝູ່ຜູ້ສົນໃຈ ແລະ ມີຈະຣິຍະວັດແບບທ້ອງຖິ່ນນິຍົມ ຜູ້ສຶກສາສົນໃຈສະເພາະເລື່ອງ ສະເພາະແນວເທົ່ານັ້ນ

ສະຖານະພາບຂອງຄຳພີໃບລານ ໃນພາກຕະວັນອອກສຽງເໜືອປະເທດໄທ

ຢ່າງໃດກໍຕາມ ຜູ້ອະນຸລັກ ຜູ້ຟື້ນຟູ ຜູ້ສຶກສາໃບລານ ໄດ້ຮັບການເຊີດຊູຈາກສະຖາບັນການສຶກສາ ໃຫ້ເປັນຜູ້ມີຜົນງານດີເດັ່ນ ທາງວັດທະນະທັມ ແລະ ມີຕຳແໜ່ງທາງວິຊາການຢ່າງ ເໝາະສົມ

## ການສຶກສາ ແລະ ການວິຈັຍຄັມພີໃບລານພາກຕະເວັນອອກສຽງເໜືອ

ການຈານ ຫລືການສ້າງຄັມພີໃບລານ ຄືການຖ່າຍທອດຄວາມຮູ້ທາງຄະດີທັມ ຄະດີໂລກ ສູ່ປະຊາຊົນ ກ່ອນທີ່ຊຸມຊົນຈະມີເຕັກໂນໂລຢີການພິມ ຜູ້ຈານຄືຜູ້ຮອບຮູ້ອ່ານອອກຂຽນໄດ້ ຊຶ່ງມີສອງລະດັບ ຄື ຄູຜູ້ສອນ ພຣະຜູ້ເທດ ໝໍຜູ້ປະກອບພິທີກັມເປັນລະດັບສູງ ສ່ວນລະດັບທີສອງ ຄື ຜູ້ບວດຮຽນ ແລະ ຜູ້ໃຝ່ໃຈໃນບຸນ ຜລານິສົງ ຄັດລອກເລື່ອງລາວໃນຄັມພີ ເພື່ອບູຊາພຣະພຸດທະເຈົ້າ ເນື້ອໃນສຳຄັນຂອງການສ້າງຄັມພີໃບ ລານ ຄືການເລົ່າຮຽນພາສາຂຽນແບບຄັດລອກບອກຕໍ່ ຜ່ານເລື່ອງລາວທີ່ເປັນຫລັກທັມ ແລະນິທານຊາດົກ

ຜູ້ຮຽນທີ່ແຕກສານ ໄດ້ຮູ້ທັງພາສາ ແລະ ຄະຕິທີ່ຜູກເປັນເລື່ອງລາວ ຮວມທັງສັນທະລັກສະນະ ຫລື ແບບແຜນການຮຽງຖ້ອຍຄຳເປັນຮ້ອຍກອງ ຮ້ອຍແກ້ວ

ສ່ວນຜູ້ປາຖະໜາບຸນ ສ່ວນນຶ່ງເຊື່ອໃນກຸສົນກັມ ຈຶ່ງບໍ່ໄດ້ພິຈາລະນາແກ່ນສານຂອງຄັມພີ ຈຶ່ງບໍ່ຕື່ນ ທາງປັນຍາ ແມ່ນແຕ່ການຄັດລອກກໍຄັດຜິດໆ ຖືກໆ ຈຳເປັນທີ່ຜູ້ໃຝ່ໃຈສຶກສາ ຕ້ອງກວດສອບຄວາມຖືກຕ້ອງ ຜູ້ຮູ້ສ່ວນໃຫຍ່ຈຶ່ງຮວບຮວມຄັມພີເລື່ອງດຽວກັນ ມາກວດສອບຄວາມຖືກຕ້ອງຂອງພາສາ ແລະ ເນື້ອຫາ ທຳການປະເມີນຄວາມໜ້າເຊື່ອຖື ດ້ວຍລະບຽບວິທີປະເມີນເອກະສານ ຈຶ່ງຈັດພິມປະຣິວັດເປັນພາສາ ສມັຍນິຍົມ

ການໃຊ້ປະໂຫຍດຈາກຄັມພີໃບລານ ເກີດຂຶ້ນໃນສັງຄົມຈາຣີດທີ່ບ້ານ ວັດ ຈັດລະບຽບດ້ວຍຕົນເອງ ອຳນາດລັດຍັງບໍ່ໄດ້ແຊກແຊງການບໍລິຫານຈັດການແບບລວມສູນ

ຫລັງການປະຕິຮູບການສຶກສາ ການພຣະສາສະໜາໃນສະມັຍ ຣ.5 ປະເທດໄທ ຈັດການສຶກສາຜ່ານ ລະບົບໂຮງຮຽນ ສ້າງຫລັກສູດຈັດການສຶກສາແບບທັນສມັຍ ຄັມພີໃບລານຈຶ່ງບໍ່ໄດ້ເລົ່າຮຽນຂຽນອ່ານ ເປັນຫລັກອີກຕໍ່ໄປ

ການສຶກສາຊ່ວງຫລັງປຣາຊພື້ນບ້ານ ຈຶ່ງກັ່ນກອງຄວາມຮູ້ດ້ານຕ່າງໆ ໄປຂຽນເປັນຕຳລາສະເພາະທາງ ເຊັ່ນ ປະເພນີບູຮານໄທອີສານ ພົດຈະນານຸກົມພາສາອີສານ ໄຂພາສິດອີສານ ວັນນະຄະດີອີສານ ມົນບູຮານອີສານ ຕຳລາຢາພື້ນບ້ານອີສານ ດັ່ງທີ່ ປຣີຊາ ພິນທອງ ກ່າວໄວ້ວ່າ

**" ວັດຖຸປະສົງສຳຄັນໃນການຂຽນໜັງສືເຫລັ້ມນີ້ ເປັນເລື່ອງການສືບທອດປະເພນີດັ້ງເດີມ ແລະ ການຜະລິດຄູ່ມື ຫລື ແນວທາງສຳຫລັບຊາວອີສານຮຸ່ນຕໍ່ມາໄດ້ຮຽນຮູ້ ແລະ ນຳໄປປະຕິບັດໃນວິຖີຊີວິດ ແລະ ສັງຄົມສມັຍປັດຈຸບັນ "**

ການສຶກສາຄັມພີໃບລານໃນພາກຕະເວັນອອກສຽງເໜືອ ແນວຄິດຫລັກຄື ໃບລານເປັນຄັງພູມປັນຍາດ້ານພາສາ ດ້ານສາສະໜາ ດ້ານປະເພນີພິທີກັມ ດ້ານປະວັດສາດ ໂຫຣາສາດ ແລະ ໄສຍະສາດ ແນວຄິດນີ້ປະກົດໃນກຸ່ມຜູ້ເຕີບໂຕ ແລະ ໄດ້ຮັບການສຶກສາຕາມຈາຮີດເດີມ ຜົນການສຶກສາ ການທຳງານຂອງກຸ່ມນີ້ເຮັດໃຫ້ເກີດສຳນຶກແບບອີສານນິຍົມ ຫລືທ້ອງຖິ່ນນິຍົມ ມີການສ້າງຄຳອະທິບາຍຕົວຕົນທາງວັດທະນະທັມຄວາມເປັນອີສານ ເອກະລັກອີສານ ໂດຍໃຊ້ວັດທະນະທັມເປັນສິ່ງບົ່ງຊີ້ ເຊັ່ນ ພາສາອີສານ ອາຫານອີສານ ຫັດຖະກັມອີສານ ຊຸມຊົນແບບອີສານ ເປັນຕົ້ນ

ຜົນການພັດທະນາປະເທດ ຜົນການຮັບເອົາວັດທະນະທັມໂລກາພິວັດ ເຮັດໃຫ້ຊາວອີສານຍຸກໃໝ່ໃຫ້ຄວາມສຳຄັນຕໍ່ຄວາມເປັນອີສານນ້ອຍລົງທຸກດ້ານ ທັງວິຖີຄິດ ວິຖີພຶດຕິກັມ ມີຄວາມຊື່ນຊົມວັດທະນະທັມຕະເວັນຕົກ ແລະ ລັດທິບໍລິໂພກນິຍົມ ວັດຖຸນິຍົມແບບທັນສມັຍ

ແນວໂນ້ມການດຳລົງຢູ່ ການປັບປ່ຽນພູມຮູ້ ພູມທັມຈາກໃບລານ ຜ່ານລະບົບການສຶກສາ ຜ່ານລະບົບຄອບຄົວ ຜ່ານລະບົບສາສະໜາ ຈຶ່ງມີໜ້ອຍດັ່ງແສງທີ່ງຫ້ອຍແຂ່ງຂັນກັບສະປອດໄລ ຫລືໄຟແຮງສູງ ແມ່ນວ່າລັດຖະທັມມະນູນສະບັບປະຊາຊົນຈະກຳໜົດໃຫ້ມີການສຶກສາ ພູມປັນຍາທ້ອງຖິ່ນ ກໍຍາກຍິ່ງທີ່ ການຜະລິດຊ້ຳຄວາມຮູ້ເດີມ ຜ່ານຄັມພີບູຮານ ຈະໄດ້ຮັບຄວາມສົນໃຈໃນກະແສໂລກາພິວັດ.